**ບົດຮຽນທີ 6 ສໍາລັບສະບາໂຕທີ 8, 2026**
**ຂອງປະທານຝ່າຍຈິດວິນຍານ**

""ຈົ່ງຕັ້ງຈຸດມຸ່ງໝາຍຫາຄວາມຮັກ ຈົ່ງຮ້ອນໃຈສະແຫວງຫາຂອງປະທານຝ່າຍພຣະວິນຍານ ໂດຍສະເພາະແມ່ນຂອງປະທານໃນການປະກາດພຣະທໍາ."
1 ໂກຣິນໂທ 14:1

ເຫັນໄດ້ຢ່າງຊັດເຈນວ່າຄຣິດຕະຈັກໃນເມືອງໂກຣິນໂທໄດ້ແຕກແຍກກັນເປັນຫລາຍປະເດັນ. ພວກເຂົາບໍ່ເຫັນດີກັບຜູ້ເທດສະໜາ ກ່ຽວກັບວິທີການກິນ, ການແຕ່ງງານ ຫລື ການຢູ່ເປັນໂສດ; ແລະ ສິ່ງໜຶ່ງກໍ່ຄື ຂອງປະທານຝ່າຍຈິດວິນຍານວ່າ ຂອງໃຜຄວນໄດ້ຮັບການຍົກຍ້ອງຫລາຍທີ່ສຸດ

ເມື່ອ ອຈ ໂປໂລໄດ້ຕອບບັນຫານີ້ໃນເບື້ອງຕົ້ນໄປແລ້ວ, ເພິ່ນກໍ່ໄດ້ສະແດງໃຫ້ເຫັນວ່າ ຂອງປະທານຝ່າຍຈິດວິນຍານນັ້ນໄດ້ປ່ຽນຈາກບັນຫາ ໃຫ້ກາຍເປັນເຄື່ອງມືຂອງຄວາມສາມັກຄີໄດ້ແນວໃດ(1 ກຣທ 12-14).

ຂອງປະທານອັນໃດດີທີ່ສຸດ? ບໍ່ມີບໍ! ເປັນຫຍັງ?

- ຂອງປະທານຝ່າຍຈິດວິນຍານ:
- ມີຂອງປະທານຫລາຍຢ່າງແຕ່ຜູ້ໃຫ້ມີຜູ້ດຽວ.
- ມີຮ່າງກາຍດຽວ ແຕ່ຫລາາຍພາກສ່ວນ.
- ອົງປະກອບທີ່ລວມກັນເປັນໜຶ່ງ:
- ຄວາມເປັນເລີດແຫ່ງຄວາມຮັກ.
- ຂອງປະທານພິເສດ:
- ຂອງປະທານແຫ່ງການເວົ້າພາສາຕ່າງໆ.
- ຂອງປະທານແຫ່ງການເຜີຍພຣະວັດຈະນະ.

**ຂອງປະທານຝ່າຍຈິດວິນຍານ**
ຂອງປະທານຫລາຍຢ່າງ ແຕ່ມີຜູ້ໃຫ້ຜູ້ດຽວ
""ຂອງປະທານຈາກພຣະວິນຍານນັ້ນ ມີຢູ່ຫລາຍຢ່າງດ້ວຍກັນ, ແຕ່ແມ່ນພຣະວິນຍານອົງດຽວກັນ. 1 ໂກຣິນໂທ 12:4
ໃຜເປັນຜູ້ມອບຂອງປະທານໃຫ້? (1 ກຣທ 12:4-6)

| | | ຂອງປະທານຝ່າຍຈິດວິນຍານ | | ຜູ້ປະທານໃຫ້ |
|---|---|---|---|---|
| 1 ກຣທ 12:4 | ມີສິ່ງທີ່ແຕກຕ່າງກັນຄື | ຂອງປະທານ | ແຕ່ວ່າຄືກັນທາງດ້ານ | ພຣະບິດາ |
| 1 ກຣທ 12:5 | | ພັນທະກິດ | | ພຣະບຸດ |
| 1 ກຣທ 12:6 | | ວຽກງານ | | ພຣະວິນຍານ |

ເພື່ອຊ່ວຍໃຫ້ພວກເຮົາເຂົ້າໃຈຄວາມສຳພັນລະຫວ່າງຂອງປະທານຝ່າຍຈິດວິນຍານ ແລະ ຜູ້ປະທານຂອງປະທານເຫລົ່ານັ້ນ, ອຈ ໂປໂລ ໃຊ້ສາມຄຳເພື່ອລະບຸເຖິງຄວາມຫລາກຫລາຍຂອງ ຂອງປະທານເຫລົ່ານັ້ນ, ໄດ້ແກ່: ຂອງປະທານການຮັບໃຊ້ ແລະ ການປະຕິບັດວຽກງານ

ຢ່າງໃດກໍ່ຕາມ, ຜູ້ປະທານໃຫ້ມີພຽງພຣະເຈົ້າອົງດຽວ ແຕ່ສາມພຣະພາກ: ພຣະວິນຍານບໍຣິສຸດ; ພຣະເຢຊູ; ແລະ ພຣະບິດາ. ທັງສາມພຣະພາກນີ້ ເຮັດວຽກຮ່ວມກັນ (ຢຮ 14:16).

ແຕ່ພຣະເຈົ້າບໍ່ໄດ້ປະທານຂອງປະທານໃຫ້ແບບ “ເທບພະເຈົ້າ” ຂອງຊາວໂລກມອບໃຫ້ (1 ກຣທ 12:2).

ບໍ່ມີການເລືອກຂອງປະທານໃຫ້ແບບແບ່ງຕາມລຳດັບ.

**ຂອງປະທານຫລາຍຢ່າງ ແຕ່ມີຜູ້ໃຫ້ຜູ້ດຽວ**

“ຂອງປະທານຈາກພຣະວິນຍານນັ້ນ ມີຢູ່ຫລາຍຢ່າງດ້ວຍກັນ, ແຕ່ແມ່ນພຣະວິນຍານອົງດຽວກັນ. 1 ໂກຣິນໂທ 12:4

ເປັນຫຍັງພຣະເຈົ້າຈຶ່ງປະທານຂອງປະທານທີ່ແຕກຕ່າງກັນ ໃຫ້ແກ່ຄົນຕ່າງໆ? (1 ກຣທ 12:7)

ຂອງປະທານຝ່າຍຈິດວິນຍານນັ້ນໃຊ້ “ເພື່ອປະໂຫຍດ” ຂອງຄຣິດຕະຈັກ.

ມີແຕ່ພຣະເຈົ້າເທົ່ານັ້ນທີ່ຮູ້ວ່າໃຜແດ່ທີ່ສາມາດໃຊ້ຂອງປະທານເພື່ອບັນລຸດເປົ້າໝາຍນັ້ນໄດ້

| ອຈ ເປົາໂລຍົກຕົວຢ່າງຂອງປະທານຫຍັງແດ່? ໃນບັນດາຂອງປະທານຫລາຍຢ່າງທີ່ມີຢູ່ (1 ກຣທ 12:8-10; ໂຣມ 12:6-8; ອຟຊ 4:11-12) | | |
|---|---|---|
| 1 ກຣທ 12:8-10 | ໂຣມ 12:6-8 | ອຟຊ 4:11-12 |
| **ຖ້ອຍຄຳແຫ່ງສະຕິປັນຍາ** | **ການຮັບໃຊ້** | **ການເປັນອັກຄະສາວົກ** |
| **ຖ້ອຍຄຳແຫ່ງຄວາມຮູ້** | **ການສັ່ງສອນ** | **ການປະກາດ** |
| **ຄວາມເຊື່ອ** | **ການຕັກເຕືອນ** | **ການເປັນສາສະໜາຈານ** |
| **ສຸຂະພາບ** | **ການເອື້ອເຟື້ອເພື່ອແຜ່** | |
| **ເຮັດການອັດສະຈັນ** | **ການເປັນຜູ້ນຳ** | |
| ການພະຍາກອນ | ການມີຄວາມເມດຕາ | |
| **ການໄຈ້ແຍກຝ່າຍຈິດວິນຍານ** | | |
| **ເວົ້າພາສາຕ່າງໆ** | | |
| **ແປພາສາຕ່າງໆ** | | |

**ມີຮ່າງກາຍດຽວ ແຕ່ຫລາຍພາກສ່ວນ**

““ເຖິງວ່າຮ່າງກາຍເປັນອັນດຽວ ກໍຍັງມີອະໄວຍະວະຫລາຍສ່ວນ ແລະອະໄວຍະວະເຫຼົ່ານັ້ນ ແມ່ນຈະມີຫລາຍສ່ວນ ກໍຍັງເປັນກາຍດຽວກັນສັນໃດ ພຣະຄຣິດກໍຊົງເປັນສັນນັ້ນ.” 1 ໂກຣິນໂທ 12:12

ພຣະເຈົ້າເປັນໜຶ່ງດຽວ, ແລະ ແຕ່ລະພຣະອົງໃນພຣະເຈົ້າມີໜ້າທີ່ຂອງຕົນເອງເຊັ່ນດຽວກັນ, ຄຣິດຕະຈັກກໍ່ເປັນໜຶ່ງດຽວກັນ ແຕ່ລະສ່ວນປະກອບຂອງຄຣິດຕະຈັກກໍມີໜ້າທີ່ຂອງຕົນເອງໃນຖານະເປັນສ່ວນໜຶ່ງຂອງພຣະກາຍຂອງພຣະຄຣິດເທິງໂລກໜ່ວຍນີ້ເຊັ່ນກັນ. (1 ກຣທ 12:12-13).

ອຈ ໂປໂລ ໃຊ້ການປຽບທຽບຮ່າງກາຍມະນຸດກັບຄຣິດຕະຈັກ ເພື່ອເນັ້ນຢ້ຳເຖິງຄວາມເປັນໜຶ່ງດຽວໃນຄວາມຫລາກຫລາຍ. ດວງຕາມີ ຂອງປະທານແຫ່ງການເບິ່ງເຫັນ, ແຕ່ຫູບໍ່ສາມາດເບິ່ງເຫັນໄດ້, ແຕ່ຫູກໍ່ສາມາດໄດ້ຍິນ ແບບທີ່ຕາບໍ່ສາມາດເຮັດໄດ້, ທັງສອງເຮັດວຽກຮ່ວມກັນໂດຍການເຮັດວຽກຮ່ວມກັນ. ໃນທຳນອງດຽວກັນ ໃນຄຣິດຕະຈັກ ແຕ່ລະຄົນຄວນເຮັດໜ້າທີ່ຂອງຕົນເອງຕາມຂອງປະທານທີ່ຕົນເອງໄດ້ຮັບ (1 ກຣທ 12:28-30).

ສິ່ງນີ້ໝາຍຄວາມວ່າ ທຸກຄົນມີຄວາມຈຳເປັນ, ບໍ່ມີໃຜຍິ່ງໃຫຍ່ກວ່າໃຜ, ທຸກຄົນຄວນຫ່ວງໄຍ ຄວາມເປັນຢູ່ທີ່ດີຂອງຄົນອື່ນ; ແລະ ທຸກຄົນຄວນເຮັດວຽກງານໜ້າທີ່ເພື່ອຄວາມເປັນໜຶ່ງດຽວຂອງຄຣິດຕະຈັກ (1 ກຣທ 12:15-27).

**ອົງປະກອບທີ່ລວມກັນເປັນໜຶ່ງ**

**ຄວາມເປັນເລີດແຫ່ງຄວາມຮັກ**

"ແຕ່ເຈົ້າທັງຫລາຍ ຈົ່ງຮ້ອນໃຈສະແຫວງຫາຂອງພຣະຣາຊທານອັນສຳຄັນກວ່ານັ້ນ. ແລະເຮົາຈະສຳແດງທາງອັນດີຫລາຍກວ່ານັ້ນອີກ ແກ່ພວກເຈົ້າ." 1 ໂກຣິນໂທ 12:31

ຄວາມຮັກບໍ່ແມ່ນຂອງຂວັນ ແຕ່ເປັນ"ທາງທີ່ດີທີ່ສຸດ" (1 ກຣທ 12:31). ເປັນຜົນຈາກພຣະວິນຍານບໍຣິສຸດໃນຊີວິດຂອງຜູ້ເຊື່ອ (ຄລຕ 5:22). ຂອງປະທານຝ່າຍຈິດວິນຍານ ຈະໃຊ້ໄດ້ຢ່າງຖືກຕ້ອງກໍ່ຕໍ່ເມື່ອຜ່ານທາງຄວາມຮັກເທົ່ານັ້ນ. ຂອງປະທານແຫ່ງການເວົ້າ, ການແປພາສາຕ່າງໆ ຖ້າຫາກປາສະຈາກຄວາມຮັກແລ້ວກໍ່ຄືກັບ "ສິ່ງທີ່ສົ່ງສຽງດັງກ້ອງກັງວານ" ແຕ່ບໍ່ມີຜົນຕໍ່ຜູ້ຟັງ , ຂອງປະທານແຫ່ງຄຳພະຍາກອນ, ຂອງປະທານແຫ່ງຄວາມຮູ້ ແລະ ຂອງປະທານແຫ່ງຄວາມເຊື່ອ ຖ້າຫາກປາສະຈາກຄວາມຮັກແລ້ວ ກໍ່ໄຮ້ຄ່າ, ຂອງປະທານແຫ່ງຄວາມເອື້ອເຟື້ອເພື່ອແຜ່  ແລະ ຂອງປະທານອື່ນໆກໍ່ເຊັ່ນກັນ, ຖ້າປາສະຈາກຄວາມຮັກແລ້ວ ກໍ່ໄຮ້ຄ່າ (1 ກຣທ 13:1-3).

1 ກຣທ 13:4-7 ໃຫ້ຄຳແນະນຳທີ່ໝັ້ນຄົງສຳລັບການປະພຶດທີ່ຖືກຕ້ອງຂອງການໃຊ້ຂອງປະທານຝ່າຍຈິດວິນຍານ:




**ຂອງປະທານພິເສດ**

**ຂອງປະທານໃນການເວົ້າພາສາຕ່າງໆ**

""ເພາະສະນັ້ນ ຄົນທີ່ເວົ້າພາສາແປກໆໄດ້ນັ້ນ ຄວນພາວັນນາອະທິຖານ ຂໍໃຫ້ຕົນເອງແປພາສາທີ່ຕົນເວົ້ານັ້ນດ້ວຍ." 1 ໂກຣິນໂທ 14:13

ການທີ່ ອຈ ໂປໂລ ເນັ້ນຢ້ຳເຖິງຂອງປະທານແຫ່ງການເວົ້າພາສາແປກໆ ແລະ ການໃຊ້ທີ່ຖືກຕ້ອງນັ້ນ, ສະແດງໃຫ້ເຫັນວ່າ ສະມາຊິກໃນຄຣິດຕະຈັກໂກຣິນໂທໃຊ້ຂອງປະທານນີ້ໃນທາງທີ່ຜິດ ເຮັດໃຫ້ເກີດຄວາມວຸ້ນວາຍ ແລະ ຄວາມສັບສົນໃນການນະມັດສະການໃນກຸ່ມຄົນທົ່ວໆໄປ (1 ກຣທ 14:23).

ຂອງປະທານແຫ່ງການເວົ້າພາສາແປກໆ ແມ່ນຄວາມສາມາດໃນການເວົ້າຂອງພາສາມະນຸດ ຫລືພາສາຂອງທູດສະຫວັນທີ່ພວກເຮົາບໍ່ຄຸ້ນເຄີຍ (1 ກຣທ 13:1). ເມື່ອຜູ້ຟັງບໍ່ເຂົ້າໃຈພາສານັ້ນ ກໍຈຳເປັນຕ້ອງມີການແປ (ກຈກ 2:8; 1 ກຣທ 14:2, 13-14, 27-28).

ຄວາມປາດຖະໜາຂອງອາຈານໂປໂລ ທີ່ວ່າ: ທຸກຄົນຄວນເວົ້າພາສາແປກໆນັ້ນ, ຖືກຕີຄວາມໝາຍຜິດ
ໂດຍມີຜູ້ທີ່ຄິດວ່າພວກເຮົາທຸກຄົນຄວນມີຂອງປະທານໂຕນັ້ນ (1 ກຣທ 14:5).
ໃນຄວາມເປັນຈິງ, ຂອງປະທານຂອງແຕ່ລະຄົນອາດແຕກຕ່າງກັນ ແລະ ຄົນໜຶ່ງອາດມີຫລາຍກວ່າ 1 ຂອງປະທານ,
ພຣະວິນຍານບໍຣິສຸດຊົງສຳແດງໃຫ້ແຕ່ລະຄົນ ເພື່ອຜົນປະໂຫຍດສ່ວນລວມ
ດັ່ງນັ້ນບໍ່ແມ່ນວ່າທຸກຄົນຈະໄດ້ຮັບຂອງປະທານທີ່ຄືກັນ(1 ກຣທ 14:1).” (1 ກຣທ 12:7 ).

**ຂອງປະທານແຫ່ງການເຜີຍຄໍາພະຍາກອນ**
“ແຕ່ພວກທີ່ປະກາດພຣະທຳກໍເວົ້າກັບມະນຸດ ເພື່ອໃຫ້ເສີມສ້າງພວກເຂົາຈະເລີນຂຶ້ນ ແລະເປັນການໜູນໃຈ ແລະ ເລົ້າໂລມໃຈພວກເຂົາ.” 1 ໂກຣິນໂທ 14:3
ພວກເຮົາບໍ່ຄວນຈຳກັດຂອງປະທານແຫ່ງການເຜີຍພຣະວັດຈະນະຂອງພຣະເຈົ້າໄວ້
ພຽງເພາະຖືວ່າເປັນການທຳນາຍໃນອະນາຄົດ, ເພາະປະໂຫຍດຫລັກຂອງການເຜີຍແຜ່ຄໍາພະຍາກອນແມ່ນເພື່ອການເສີມສ້າງ, ການຕັກເຕືອນ, ແລະ ການປອບໂຍນ (1 ກຣທ14:3).

ອຈ ໂປໂລ ເນັ້ນວ່າຂອງປະທານນີ້ແມ່ນເໜືອຂອງປະທານອື່ນໆ (1 ກຣທ 14:1, 4, 22-25).
ແຕ່ເພິ່ນຍັງເນັ້ນຢໍ້າໃຫ້ໃຊ້ຂອງປະທານນີ້ຢ່າງຖືກຕ້ອງ ເພື່ອບໍ່ໃຫ້ເກີດຄວາມສັບສົນ: ““ຈົ່ງເຮັດທຸກສິ່ງໃຫ້ຖືກຕ້ອງແລະມີລະບຽບ.”
1 ໂກຣິນໂທ14:40

ໃນຖານະຂອງປະທານສະເພາະຂອງຄຣິດຕະຈັກທີ່ເຫລືອຢູ່, ຂອງປະທານນີ້ໄດ້ສະແດງອອກຢ່າງໂດດເດັ່ນໃນຊີວິດ ແລະ ວຽກງານຂອງທ່ານ ນາງ ເອເລັນ ຈີ ໄວທ໌ Ellen G. White (ພນມ 12:17; 19:10).
ແຕ່ພວກເຮົາຈະຮູ້ໄດ້ແນວໃດວ່າຜູ້ເຜີຍຄໍາພະຍາກອນນີ້ແມ່ນແທ້ຈິງ?

- ເຫດການໃນອະນາຄົດທີ່ພະຍາກອນໄວ້, ຖ້າບໍ່ແມ່ນເຫດການທີ່ມີເງື່ອນໄຂ, ສິ່ງນັ້ນຈະເກີດຂຶ້ນຈິງ (ພບຍສ 18:22; ຢຣມຢ 28:8-9; ຢນ 4:2)
- ຄໍາສອນຂອງຜູ້ເຜີຍຄໍາພະຍາກອນ ຈະຕ້ອງສອດຄ່ອງກັບຄໍາສອນຂອງບັນດາຜູ້ເຜີຍຄໍາພະຍາກອນໃນອະດີດ, ແລະ ສອດຄ່ອງກັບພຣະຄໍາພີ
  (ພບຍສ 13:1-3; ອຊຢ 8:20)
- ຜູ້ເຜີຍຄໍາພຣະຍາກອນຕ້ອງເປັນພະຍານເຖິງການບັງເກີດຂອງພຣະເຢຊູ
  (1 ຢຮ 4:1-3)
- ຊີວິດຂອງຜູ້ເຜີຍຄໍາພະຍາກອນຕ້ອງສອດຄ່ອງກັບຄໍາເທດສະໜາໃນພຣະຄໍາພີທີ່ລາວໄດ້ປະກາດ(ມທ 7:15-20)

**EGW (Ye Shall Receive Power, July 1)**
“ໃນການຈັດຕຽມທັງໝົດຂອງພຣະຜູ້ເປັນເຈົ້າ,
ບໍ່ມີສິ່ງໃດຈະງົດງາມໄປກວ່າແຜນການຂອງພຣະອົງໃນການປະທານຂອງປະທານທີ່ຫຼາກຫຼາຍໃຫ້ແກ່ຊາຍ ແລະ ຍິງ.
ຄຣິສຕະຈັກແມ່ນສວນຂອງພຣະອົງ, ທີ່ຖືກປະດັບປະດາດ້ວຍຕົ້ນໄມ້, ພືດ, ແລະ ດອກໄມ້ນານາພັນ.
ພຣະອົງບໍ່ໄດ້ຄາດຫວັງໃຫ້ຕົ້ນຫຍ້າຍຸບຍອບ (ຫຍ້າໜາມ)ເຕີບໃຫຍ່ຈົນມີຂະໜາດເທົ່າຕົ້ນເຊດາ, ຫຼື

ໃຫ້ຕົ້ນສູງເທົ່າຕົ້ນຕານທີ່ສະຫງ່າງາມ. ຫຼາຍຄົນອາດຈະໄດ້ຮັບການຝຶກອບຮົມດ້ານສາສະໜາ ແລະ ດ້ານສະຕິປັນຍາຢ່າງຈຳກັດ, ແຕ່ພຣະເຈົ້າມີວຽກງານໃຫ້ຄົນກຸ່ມນີ້ເຮັດ, ຖ້າພວກເຂົາຮັບໃຊ້ດ້ວຍຄວາມຖ່ອມໃຈ ແລະ ວາງໃຈໃນພຣະອົງ…”

ຂອງປະທານທີ່ແຕກຕ່າງກັນໄດ້ຖືກປະທານໃຫ້ແກ່ແຕ່ລະຄົນທີ່ແຕກຕ່າງກັນ, ເພື່ອໃຫ້ຜູ້ຮ່ວມງານໄດ້ຮູ້ສຶກເຖິງຄວາມຕ້ອງການເຊິ່ງກັນ ແລະ ກັນ. ພຣະເຈົ້າຊົງປະທານຂອງປະທານເຫຼົ່ານີ້, ແລະ ສິ່ງເຫຼົ່ານັ້ນຖືກນຳມາໃຊ້ໃນການຮັບໃຊ້ພຣະອົງ, ບໍ່ແມ່ນເພື່ອຍົກຍ້ອງຜູ້ທີ່ຄອບຄອງ, ບໍ່ແມ່ນເພື່ອຍົກຍ້ອງມະນຸດ, ແຕ່ເພື່ອຍົກຍ້ອງພຣະຜູ້ໄຖ່ຂອງໂລກ. ຂອງປະທານເຫຼົ່ານີ້ມີໄວ້ເພື່ອໃຊ້ສຳລັບຜົນປະໂຫຍດຂອງມວນມະນຸດທັງໝົດ, ໂດຍການເປັນຕົວແທນຂອງຄວາມຈິງ, ບໍ່ແມ່ນການເປັນພະຍານໃຫ້ກັບຄວາມເທັດ.